**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງສຶກສາທິການ ແລະ ກິລາ

ຫ້ອງການ

ເລກທີ 378 /ຫກ

ນະຄອນຫຼວງວຽງຈັນ, ວັນທີ 05 ມີນາ 2025

# ແຈ້ງທຶນການສຶກສາ

**ຮຽນ:** - ທ່ານ ອະທິການບໍດີ ມະຫາວິທະຍາໄລທັງ 5 ແຫ່ງ.
- ທ່ານ ຫົວໜ້າພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ.
- ບັນດາພະນັກງານ, ລັດຖະກອນ, ນັກຮຽນ-ນັກສຶກສາ ແລະ ທ່ານພໍ່ແມ່ປົກຄອງ.

**ເລື່ອງ:** ແຈ້ງທຶນການສຶກສາ ລະດັບປະລິນຍາຕີ ແລະ ມັດທະຍົມຕອນປາຍ (ມ 5) ຂອງລັດຖະບານ ສສ. ຫວຽດນາມ ສຳລັບປີ 2025.

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 4883/ຫກ, ລົງວັນທີ 23 ກັນຍາ 2022;
- ອີງຕາມ ແຜນການຮ່ວມມືປະຈຳປີ 2025 ລະຫວ່າງ ກະຊວງສຶກສາທິການ ແລະ ກິລາ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ກະຊວງສຶກສາ ແລະ ກໍ່ສ້າງ ແຫ່ງ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ ທີ່ໄດ້ລົງນາມຮ່ວມກັນ, ຄັ້ງວັນທີ 09 ມັງກອນ 2025 ທີ່ນະຄອນຫຼວງວຽງຈັນ ສປປ ລາວ;
- ອີງຕາມ ຄຳເຫັນ ຂອງທ່ານຮອງລັດຖະມົນຕີ ກະຊວງສຶກສາທິການ ແລະ ກິລາ, ຄັ້ງວັນທີ 27 ກຸມພາ 2025.

ຫ້ອງການ ກະຊວງສຶກສາທິການ ແລະ ກິລາ ຂໍຖືເປັນກຽດແຈ້ງມາຍັງທຸກພາກສ່ວນ ທີ່ປົກຄອງຊາບວ່າ: ລັດຖະບານ ແຫ່ງ ສສ. ຫວຽດນາມ ມອບທຶນການສຶກສາແກ່ພົນລະເມືອງລາວ ຜູ້ທີ່ມີຄວາມສົນໃຈໄປສຶກສາຕໍ່ໃນ ສສ. ຫວຽດນາມ ປະຈຳປີ 2025, ໃນລະດັບ ປະລິນຍາຕີ ແລະ ລະດັບມັດທະຍົມຕອນປາຍ (ມ5), (ຫຼັກສູດການຮຽນ-ການສອນເປັນພາສາຫວຽດ ແລະ ມີປະລິນຍາຕີ ຈຳນວນ 5 ທຶນ ທີ່ຫຼັກສູດການຮຽນການສອນເປັນພາສາອັງກິດ. ເປີດຮັບຜູ້ທີ່ມີຈຸດປະສົງຢາກໄປສຶກສາຕໍ່ປະເທດດັ່ງກ່າວ ຕາມຂະແໜງການ (ວິຊາຮຽນ) ທີ່ຄັດຕິດມາພ້ອມນີ້:

## I. ນະໂຍບາຍທີ່ລັດຖະບານ ສສ. ຫວຽດນາມຊ່ວຍເຫຼືອ

ຄ່າເດີນທາງໄປ-ກັບລະຫວ່າງປະເທດ, ຄ່າຮຽນ, ເບ້ຍລ້ຽງປະຈຳເດືອນ, ທີ່ພັກ, ຄ່າປະກັນສຸຂະພາບ ແລະ ຄ່າຮຽນກຽມພາສາຫວຽດຢູ່ ສປປ ລາວ ກ່ອນການເດີນທາງ.

## I. ເງື່ອນໄຂຂອງຜູ້ສະໝັກ

1. ເປັນຄົນລາວ ຖືສັນຊາດລາວ, ມີຄຸນສົມບັດດີ, ຊີວະປະຫວັດຈະແຈ້ງ ແລະ ສຸຂະພາບແຂງແຮງດີສຳລັບຊັ້ນມັດທະຍົມສຶກສາຕອນປາຍ ອາຍຸບໍ່ໃຫ້ເກີນ 17 ປີ ແລະ ປະລິນຍາຕີ ອາຍຸບໍ່ໃຫ້ເກີນ 35 ປີ;
2. ສຳເນົາໃບປະກາສະນີຍະບັດ ແລະ ໃບຄະແນນທີ່ຈົບສູງສຸດ ຄະແນນສະເລັ່ຍ 7/10 ຂຶ້ນໄປ, ກໍລະນີກຽມຈະຈົບ ມ.4 ແລະ ມ.7 (ຈະສືບຕໍ່ຮຽນ ມ.5 ແລະ ລະດັບປະລິນຍາຕີ ຕ້ອງມີໃບຢັ້ງຢືນຈາກໂຮງຮຽນທີ່ຜູ້ກ່ຽວຈະຈົບໃນປີ 2025 ແລະ ມີໃບຢັ້ງຢືນຄະແນນສະເລ່ຍປະຈຳປີທີ່ຜ່ານມາ ແລະ ຄະແນນເສັງພາກຮຽນທີ 1 ຄັດຕິດມາພ້ອມ).

3. ຜູ້ທີ່ຮູ້ພາສາຫວຽດ (ຮຽນຈົບມາຈາກ ສສ. ຫວຽດນາມ ຈະໄດ້ຮັບບຸລິມະສິດພິເສດ);
4. ຜູ້ທີ່ສະໝັກຮຽນລະດັບປະລິນຍາຕີ ຫຼັກສູດພາສາອັງກິດຕ້ອງມີຄະແນນ IELTS 5,5 ຂຶ້ນໄປ.

## II. ວິທີສະໝັກ

ຜູ້ສົນໃຈສະໝັກໃຫ້ໄປພົວພັນ, ສອບຖາມຂໍ້ມູນລາຍລະອຽດ ແລະ ແບບຟອມສະໝັກ ຢູ່ທີ່ກົມກິດຈະການນັກສຶກສາ ກະຊວງສຶກສາທິການ ແລະ ກິລາ (ເຂດສະໜາມກິລາເຈົ້າອານຸວົງ) ຫຼື ສາມາດດາວໂຫຼດເອົາແບບຟອມທີ່ເວັບໄຊຂອງກົມ: www.moes.dsa.edu.la ແລະ ຕິດຕໍ່ສອບຖາມສູນບໍລິການນັກສຶກສາຕາມເບີໂທ: 021 255 035, ພາຍຫຼັງປະກອບເອກະສານຄົບຖ້ວນແລ້ວສົ່ງມາຍັງພະແນກຄຸ້ມຄອງທຶນການສຶກສາ ແລະ ນັກສຶກສາ ຫ້ອງ 107-108 ພາຍໃນວັນສຸກ ທີ **21 ມີນາ 2025** ເປັນມື້ປິດຮັບສະໝັກ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານປວງຊົນເພື່ອຊາບ ແລະ ດໍາເນີນການສະໝັກໃຫ້ທັນເວລາດ້ວຍ.

ເຊັນແທນ. **ຫົວໜ້າຫ້ອງການ**

ຫ້ອງການ

ພົນນະແສງ **ທິບພະວົງ**